| | | |
|---|---|---|
| | ຫົວຂໍ້:ນະໂຍບາຍການຮັກສາ ແລະ ການບໍລິຫານຈັດການຄວາມເສຍຫາຍຂອງອຸປະກອນໄອທີ (v1.0) | |
| | ເອກະສານເລກທີ.: KST-IT-DMP-001 | ໜ້າທີ: 1/5 |

# ນະໂຍບາຍການຮັກສາ ແລະ ການບໍລິຫານຈັດການຄວາມເສຍຫາຍຂອງອຸປະກອນໄອທີ (v1.0)

| | ຊື່ | ຕຳແໜ່ງ | ລາຍເຊັນ | ວັນທີ |
|---|---|---|---|---|
| ຈັດກຽມໂດຍ: | ສັກທະວີ ລາສີຈັນ | ຜູ້ຊ່ຽວຊານດ້ານລະບົບໄອທີ | | 11/09/2024 |
| ກວດກາໂດຍ: | ນໍແມນ ກຣຸນານັນ | ຜູ້ຈັດການຝ່າຍໄອທີ | | 4/09/2024 |
| ອະນຸມັດໂດຍ: | ສີຫາມະໂນ ບັນນາວົງ | ຜູ້ບໍລິຫານສູງສຸດ | | 11/09/2024 |

## I. ຈຸດປະສົງ:

ນະໂຍບາຍສະບັບນີ້ໄດ້ຖືກສ້າງຂຶ້ນໂດຍມີຈຸດປະສົງເພື່ອແຈ້ງການເຖິງຜູ້ທີ່ໃຊ້ງານອຸປະກອນໄອທີທຸກຄົນພາຍໃນກຸ່ມບໍລິສັດເຄເອັສທີກ່ຽວກັບຄວາມຮັບຜິດຊອບໃນການຮັກສາ ແລະ ປົກປ້ອງຄອມພິວເຕີ້ ຂອງບໍລິສັດ ແລະ ອຸປະກອນໄອທີຕ່າງໆທັງໝົດ. ໂດຍມີເປົ້າໝາຍເພື່ອໃຫ້ພະນັກງານທຸກຄົນເຂົ້າໃຈ ແລະ ປະຕິບັດຕາມນະໂຍບາຍທີ່ໄດ້ກຳນົດໄວ້ເພື່ອປ້ອງກັນຄວາມເສຍຫາຍທີ່ອາດເກີດຂຶ້ນ ແລະ ຂັ້ນຕອນຂອງນະໂຍບາຍທີ່ຈະໄດ້ປະຕິບັດຕາມເມື່ອກໍລະນີທີ່ມີຄວາມເສຍຫາຍເກີດຂຶ້ນ.

## II. ຂອບເຂດ:

ນະໂຍບາຍນີ້ແມ່ນມີຂອບເຂດໃນການໃຊ້ງານກັບພະນັກງານທຸກຄົນທີ່ຢູ່ໃນກຸ່ມບໍລິສັດເຄເອັສທີທີ່ນຳໃຊ້ຄອມພິວເຕີຮູບແບບຕ່າງໆ ແລະ ອຸປະກອນໄອທີຕ່າງໆທີ່ກ່ຽວຂ້ອງທັງໃນຮູບແບບທີ່ຢືມໃຊ້ ຫຼື ຖືກເບີກຈ່າຍໃຫ້ກັບພະນັກງານຈາກພະແນກໄອທີ.

## III. ລາຍລະອຽດນະໂຍບາຍ:

ພະນັກງານທີ່ໄດ້ໃຊ້ງານອຸປະກອນໄອທີທັງໝົດແມ່ນໄດ້ຮັບການຄາດຫວັງໃຫ້ມີຄວາມຮັບຜິດຊອບໃນການຮັກສາອຸປະກອນໄອທີທີ່ໄດ້ຮັບການເບີກຈ່າຍໃຫ້ໃຊ້ງານເພື່ອໃຫ້ຮັບປະກັນວ່າອຸປະກອນມີອາຍຸການໃຊ້ງານ ແລະ ຍັງເຮັດວຽກໄດ້ຍາວນານ. ແນວທາງ ແລະ ຂັ້ນຕອນຕໍ່ໄປນີ້ແມ່ນຂໍ້ບັງຄັບທີ່ຕ້ອງໄດ້ປະຕິບັດຕາມເພື່ອປົກປ້ອງອຸປະກອນໄອທີຂອງບໍລິສັດ ແລະ ເປັນແນວທາງແກ້ໄຂບັນຫາທີ່ເກີດຂຶ້ນ:

### 1. ຄວາມຄາດຫວັງຕໍ່ການຮັບຜິດຊອບອຸປະກອນ

- ພະນັກງານ ແລະ ຜູ້ໃຊ້ງານທັງໝົດໃນກຸ່ມບໍລິສັດເຄເອັສທີຖືກຄາດຫວັງໃຫ້ໃຊ້ງານຄອມພິວເຕີຂອງບໍລິສັດ ແລະ ອຸປະກອນໄອທີອື່ນໆດ້ວຍຄວາມລະມັດລະວັງ ແລະ ປະຕິບັດຕາມແນວທາງການໃຊ້ງານເພື່ອປ້ອງກັນຄວາມເສຍຫາຍຈາກອຸບັດຕິເຫດ.
- ອຸປະກອນຕ່າງໆຄວນໃຊ້ງານສຳລັບໜ້າວຽກທີ່ກ່ຽວຂ້ອງ, ແລະ ຜູ້ໃຊ້ງານຕ້ອງປະຕິບັດຕາມຂໍ້ກຳນົດ ແລະ ນະໂຍບາຍການໃຊ້ງານ.
- ພະນັກງານຕ້ອງຫຼີກລ່ຽງການຮັບປະທານອາຫານ ຫຼື ດື່ມເຄື່ອງດື່ມໃກ້ກັບຄອມພິວເຕີ ແລະ ໝັ້ນໃຈວ່າເຄື່ອງໄອທີໄດ້ເກັບມ້ຽນຢ່າງປອດໄພໃນເວລາທີ່ບໍ່ໄດ້ໃຊ້ງານ.
- ການລົງໂປຣແກຣມຄວນດຳເນີນການໂດຍ ຫຼື ໄດ້ຮັບອະນຸຍາດຈາກພະແນກໄອທີ

### 2. ການຮັບຮູ້ ແລະ ປະຕິບັດຕາມຂໍ້ກຳນົດ

- ຜູ້ໃຊ້ງານທັງໝົດຕ້ອງອ່ານ, ທຳຄວາມເຂົ້າໃຈ ແລະ ຮັບຮູ້ນະໂຍບາຍສະບັບນີ້.
- ການປະຕິບັດຕາມນະໂຍບາຍນີ້ເພື່ອໃຫ້ໝັ້ນໃຈວ່າມີການປົກປ້ອງຊັບສິນບໍລິສັດ.

### 3. ການລາຍງານຄວາມເສຍຫາຍທີ່ເກີດຂຶ້ນ

- ຄວາມເສຍຫາຍຕ່າງໆທີ່ເກີດຂຶ້ນກັບຄອມພິວເຕີ ຫຼື ອຸປະກອນໄອທີຕ່າງໆທີ່ເປັນຊັບສິນຂອງກຸ່ມບໍລິສັດເຄເອັສທີທັງໝົດຈະຕ້ອງໄດ້ມີການລາຍງານຫາພະແນກໄອທີໂດຍທັນທີ, ພ້ອມທັງລະບຸສາເຫດໃນການເກີດເຫດການ.

- ຜູ້ໃຊ້ງານຈະຕ້ອງລາຍງານ ແລະ ອະທິບາຍລາຍລະອຽດຂອງເຫດການທີ່ນໍາໄປສູ່ການເກີດຄວາມເສຍຫາຍ.
- ຖ້າເກີດມີຄວາມເສຍຫາຍທີ່ກວດພົບເຫັນເອງໂດຍພະແນກໄອທີ ໂດຍທີ່ບໍ່ໄດ້ມີການລາຍງານຫາພະແນກໄອທີ , ຈະຖືກຈັດເປັນໝວດໝູ່ຄວາມຮ້າຍແຮງລໍາດັບທີ 3 ໃນຫົວຂໍ້ທີ 4.

## IV. ຂັ້ນຕອນປະຕິບັດຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ:

ໃນກໍລະນີທີ່ຄອມພິວເຕີເກີດຄວາມເສຍຫາຍ, ລະດັບຄວາມຮຸນແຮງຕໍ່ໄປນີ້ຈະຖືກນໍາໃຊ້ໂດຍອີງຕາມຄວາມຮຸນແຮງຂອງເຫດການທີ່ເກີດຂຶ້ນ:

**ລະດັບທີ 1**: ບັນຫາທາງດ້ານທຳມະຊາດ ແລະ ເຫດການທີ່ບໍ່ຄາດຝັນ

- ຫົວຂໍນີ້ຈະລວມເຖິງຄວາມເສຍຫາຍທີ່ເກດຈາກເຫດການທີ່ບໍ່ຄາດຝັນ ຫຼື ຄວາມບົກພ່ອງຂອງອຸປະກອນເອງ ເຊັ່ນວ່າ, ການຜະລິດທີ່ບໍ່ໄດ້ມາດຕະຖານ ຫຼື ບັນຫາທີ່ເກີດຈາກສ່ວນປະກອບອຸປະກອນທີ່ບົກພ່ອງ.
- ຫົວຂໍ້ນີ້ລວມເຖິງເຫດການທີ່ເຮົາບໍ່ສາມາດຄວບຄຸມໄດ້ ແລະ ບໍ່ໄດ້ເກີດຈາກການກະທໍາຂອງຜູ້ໃຊ້ງານ, ເຊັ່ນວ່າຄວາມເສຍຫາຍທີ່ເກີດຈາກນໍ້າ ຫຼື ຂອງເຫຼວ ທີ່ມາຈາກສິ່ງແວດລ້ອມທີ່ບໍ່ສາມາດຄວບຄຸມໄດ້ ຫຼື ໄພທໍາມະຊາດ, ແຕ່ຕ້ອງເກີດຂຶ້ນພາຍໃນອາຄານທີ່ເປັນຊັບສິນຂອງກຸ່ມບໍລິສັດເຄເອັສທີເທົ່ານັ້ນເຊັ່ນວ່າອາຄານວຽງທອງ , ໃສສະອາດ ແລະ ໄອເອັມດີຊີ.
- ຜູ້ໃຊ້ງານຕ້ອງລາຍງານເຫດການໂດຍທັນທີໃຫ້ກັບພະແນກໄອທີເພື່ອດໍາເນີນການປະເມີນ ແລະ ແກ້ໄຂ.
- ຖ້າຫາກພະແນກໄອທີພິຈາລະນາແລ້ວວ່າບັນຫາທີ່ເກີດຂຶ້ນແມ່ນມາຈາກບັນຫາດ້ານອຸປະກອນບົກພ່ອງ, ບໍລິສັດຈະຄຸ້ມຄອງຄ່າໃຊ້ຈ່າຍໃນການດໍາເນີນການສ້ອມແປງທັງໝົດ.

**ລະດັບທີ 2**: ເຫດການທີ່ເກີດຂຶ້ນຈາກຄວາມປະໝາດທີ່ຍອມຮັບໄດ້ໃນເຫດການທີ່ບໍ່ຄາດຝັນ.

- ລະດັບນີ້ຈະລວມເອົາເຫດການທີ່ເກີດຈາກຄວາມເສຍຫາຍທີ່ມາຈາກຄວາມປະໝາດຂອງຜູ້ໃຊ້ງານທີ່ມີສ່ວນເຮັດໃຫ້ເກີດຄວາມເສຍຫາຍ, ແຕ່ເກີດຂຶ້ນພາຍໃນສະຖານະການທີ່ຄາດບໍ່ເຖິງໃນອາຄານຂອງກຸ່ມບໍລິສັດເຄເອັສທີ. ສະຖານະການນີ້ຈະຖືກຍອມຮັບຖ້າຫາກພະແນກໄອທີ, ບໍລິຫານ ແລະ ບຸກຄະລາກອນເຫັນດີພ້ອມກັນ.

- ຖ້າຫາກຜູ້ໃຊ້ງານໃດ້ມີການດັດແປງອຸປະກອນໄອທີໃນຮູບແບບໃດກໍຕາມ, ເຖິງແມ່ນວ່າຈະບໍ່ໃດ້ກ່ຽວກັບເຫດການທີ່ເຮັດໃຫ້ເກີດຄວາມເສຍຫາຍ, ຈະຖືກຈັດໃນຄວາມຮຸນແຮງລະດັບທີ 2 ອັດຕະໂນມັດ.
- ໃນກໍລະນີນີ້ຈະໃດ້ຮັບການກວດສອບຢ່າງລະອຽດ ແລະ ໃດ້ຮັບການອະນຸມັດຈາກຝ່າຍບຸກຄະລາກອນ/ບໍລິຫານເພື່ອໃຫ້ໝັ້ນໃຈວ່າເກີດຈາກສະຖານະການທີ່ບໍ່ຄາດຄິດແທ້. ສຳລັບກໍລະນີນີ້, ບໍລິສັດຈະຄຸ້ມຄອງຄ່າດຳເນີນການໃຫ້ 50%, ຫຼື ອາດຈະປ່ຽນເປັນໜ່ວຍໃໝ່ໃນກໍລະນີທີ່ຄອມພິວເຕີບໍ່ສາມາດສ້ອມແປງໃດ້ແລ້ວ.
- ຄວາມເສຍຫາຍລະດັບນີ້ຈະຖືກບັນທຶກໃວ້ໃນປະຫວັດເພື່ອການອ້າງອີງໃນອະນາຄົດ.

**ລະດັບທີ 3**: ເຫດການທີ່ເກີດຈາກຄວາມປະໝາດທີ່ບໍ່ສາມາດຍອມຮັບໃດ້

- ລະດັບນີ້ຈະກ່ຽວຂ້ອງກັບຄວາມເສຍຫາຍທີ່ເກີດຂຶ້ນຈາກຄວາມປະໝາດຢ່າງໂຈ່ງແຈ້ງຕັ້ງໃຈ ຫຼື ການກະທຳທີ່ປະໝາດແບບຊ້ຳເກົ່າ. ເຊິ່ງລວມເຖິງສະຖານະການທີ່ບຸກຄົນນັ້ນຕັ້ງໃຈ ຫຼື ປະໝາດຢ່າງຕັ້ງໃຈເຮັດໃຫ້ຄອມພິວເຕີເກີດຄວາມເສຍ, ຫຼື ສະແດງເຖິງຄວາມປະໝາດທີ່ມີສູງເຖິງແມ່ນວ່າຈະຮູ້ເຖິງຜົນກະທົບທີ່ຈະເກີດຂຶ້ນກໍຕາມ.
- ໃນກໍລະນີເພີ່ມເຕີມ, ຖ້າຫາກວ່າຊັບສິນເດີມເກີດຄວາມເສຍຫາຍຄັ້ງທີ 2 ຫຼື ຫຼາຍກວ່າ 2 ຄັ້ງ ໃນລະດັບທີ 2, ກໍລະນີນີ້ຈະໃດ້ນັບເປັນຄວາມຮຸນແຮງລະດັບທີ 3 ທັນທີ.
- ສຳລັບກໍລະນີໃດໆກໍຕາມທີ່ຄອມພິວເຕີມີຄວາມເສຍຫາຍເປ່ເພແຕ່ບໍ່ໃດ້ມີການລາຍງານຫາພະແນກໄອທີ, ຖ້າຫາກພົບເຫັນໂດຍພະແນກໄອທີ, ບຸກຄະລາກອນ, ບໍລິຫານ, ກໍລະນີນີ້ຈະຖືກນັບເປັນຄວາມຮຸນແຮງລະດັບ 3 ໂດຍທີ່ບໍ່ມີການຫາສາເຫດທີ່ເກີດຂຶ້ນ.
- ຄວາມຮຸນແຮງລະດັບນີ້ຈະລວມເຖິງກໍລະນີທີ່ຜູ້ໃຊ້ງານດັດແປງອຸປະກອນໄອທີຕ່າງໆ, ທີ່ເຮັດໃຫ້ເກີດຄວາມເສຍຫາຍ ຫຼື ເປ່ເພ, ໂດຍກໍລະນີນີ້ຈະນັບເປັນຄວາມຮຸນແຮງລະດັບທີ 3 ທັນທີ.
- ໃນກໍລະນີນີ້, ຫຼັງຈາກທີ່ໃດ້ມີການກວດກາຢ່າງລະອຽດຈາກພະແນດໄອທີ ແລະ ອະນຸມັດຈາກພະແນກບຸກຄະລາກອນ/ບໍລິຫານ, ຜູ້ກ່ຽວຂ້ອງທີ່ເຮັດໃຫ້ອຸປະກອນໄອທີມີຄວາມເສຍຫາຍຈະຕ້ອງຮັບຜິດຊອບຕໍ່ຄ່າໃຊ້ຈ່າຍໃນການດຳເນີນການສ້ອມແປງ ຫຼື ຊື້ໃໝ່ໃຫ້ກັບບໍລິສັດໃນກໍລະນີທີ່ບໍ່ສາມາດສ້ອມແປງໃດ້.
- ຄວາມຮຸນແຮງລະດັບນີ້ຈະຖືກບັນທຶກໄວ້ເພື່ອອ້າງອີງໃນອະນາຄົດ.

**ຂໍ້ບັງຄັບໃຊ້:**

ອີງຕາມນະໂຍບາຍສະບັບນີ້, ພະນັກງານທຸກຄົນໃນກຸ່ມບໍລິສັດເຄເອັສທີໄດ້ຮັບການຄາດຫວັງໃຫ້ມີສ່ວນຮ່ວມໃນການຮັກສາຄອມພິວເຕີຂອງບໍລິສັດເພື່ອໃຫ້ມີອາຍຸການໃຊ້ງານຍາວນານ, ເພື່ອໃຫ້ໝັ້ນໃຈວ່າສາມາດສ້າງສະພາບແວດລ້ອມການເຮັດວຽກມີປະສິດທິພາບ. ໂດຍການປະຕິບັດຕາມແນວທາງເຫຼົ່ານີ້ຈະຊ່ວຍຫຼຸດຜ່ອນຄວາມສ່ຽງກ່ຽວກັບຄວາມເສຍຫາຍຂອງຄອມພິວເຕີ ແລະ ເຮັດໃຫ້ມີອາຍຸການໃຊ້ງານທີ່ຍາວນານ. ການບໍ່ປະຕິບັດຕາມນະໂຍບາຍຂອງນະໂຍບາຍສະບັບນີ້ອາດສົ່ງຜົນໃຫ້ເກີດການລົງໂທດທາງວິໄນ, ລວມເຖິງການຮັບຜິດຊອບຄ່າໃຊ້ຈ່າຍສໍາລັບການດໍາເນີນການສ້ອມແປງ ຫຼື ຊື້ເຄື່ອງໃໝ່, ແລະ ມາດຕະການທາງວິໄນອີງຕາມຄວາມເໝາະສົມທີ່ບໍລິສັດໄດ້ວາງອອກ.

**ການທົບທວນ ແລະ ກວດແກ້:**

ນະໂຍບາຍສະບັບນີ້ຈະໄດ້ຮັບການທົບທວນເປັນໄລຍະເພື່ອໃຫ້ປະສິດຕິພາບ ແລະ ຄວາມສອດຄ່ອງຖືກຕ້ອງຕາມນະໂຍບາຍຂອງກຸ່ມບໍລິສັດເຄເອັສທີ. ການກວດແກ້ໃດໆຈະໄດ້ຮັບການປຶກສາຈາກພາກສ່ວນທີ່ກ່ຽວຂ້ອງ.

**ວັນທີບັງຄັບໃຊ້:**

ນະໂຍບາຍສະບັບນີ້ແມ່ນມີຜົນຕັ້ງແຕ່ວັນທີ [ 11 / 09 / ໒໐໒໔ ]ແລະ ຈະແທນທີ່ນະໂຍບາຍກ່ອນໜ້ານີ້ທັງໝົດທີ່ກ່ຽວຂ້ອງກັບຄວາມເສຍຫາຍຂອງອຸປະກອນໄອທີທີ່ເກີດຂຶ້ນໃນກຸ່ມບໍລິສັດເຄເອັສທີ.

ຜ່ານການຮັບຮູ້ນະໂຍບາຍສະບັບນີ້, ພະນັກງານທັງໝົດໃນກຸ່ມບໍລິສັດເຄເອັສທີຈະຕົກລົງຕາມແນວທາງປະຕິບັດຂອງນະໂຍບາຍສະບັບນີ້ ແລະ ເຂົ້າໃຈເຖິງຜົນທີ່ຕາມມາຫາກບໍ່ປະຕິບັດຕາມ.